# ຄູ່ມື

# ການນຳໃຊ້ PKI USB LCA TOKEN

ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ

ສູນອິນເຕີເນັດ ແຫ່ງຊາດ

ປີ 2021

**Version: 1.0**

# ສາລະບານ

1. Token ແມ່ນຫຍັງ?........................................................................................ 1

2. ການຕິດຕັ້ງ ແລະ ກວດສອບການລົງໂປຣແກມ LCA ............................................................. 2

2.1. ການຕິດຕັ້ງ ໂປຣແກມ LCA .............................................................................. 2

2.2. ວິທີກວດສອບການລົງໂປຣແກມ LCA........................................................................ 4

3. ຂັ້ນຕອນການນຳໃຊ້ໂປຣແກມ LCA............................................................................ 6

3.1. ຂໍ້ມູນລາຍລະອຽດຂອງ ຮາດແວ PKI USB LCA TOKEN ..................................................... 6

3.2. ການຈັດການກ່ຽວກັບ ລະຫັດ PIN ............................................................................ 8

3.3. ການຂໍປົດລ໋ອກ ລະຫັດຜ່ານ PIN ............................................................................. 8

4. ຂໍ້ມູນລາຍລະອຽດໃບຮັບຮອງລາຍເຊັນເອເລັກໂຕຣນິກ (Certificates) ........................................... 9

4.1. ການລົງທະບຽນນຳໃຊ້ ໃບຮັບຮອງລາຍເຊັນເອເລັກໂຕນິກ ................................................... 9

4.2. ການຕິດຕັ້ງ File Certificate NRCA ແລະ LCA ໃສ່ຄອມພິວເຕີທີ່ຍັງບໍ່ທັນມີ Certificate................ 11

5. ການໃຊ້ງານໂປຣມແກມ LCA ............................................................................... 16

5.1. ການໃຊ້ງານຫຼັງຈາກ ລົງທະບຽນນຳໃຊ້ສຳເລັດແລ້ວ ......................................................... 18

5.2. ວິທີກວດສອບໃບຮັບຮອງລາຍເຊັນເອເລັກໂຕຣນິກ.............................................................. 19

5.3. ການລົງທະບຽນນຳໃຊ້ ໃບຮັບຮອງລາຍເຊັນເອເລັກໂຕຣນິກ (Register Certificate).......................... 20

5.4. ການຕໍ່ອາຍຸໃບຮັບຮອງ ລາຍເຊັນເອເລັກໂຕຣນິກ (Upgrade Certificate) ..................................... 20

5.5. ການປ່ຽນແປງຂໍ້ມູນສ່ວນຕົວ (Change Information)........................................................ 20

5.6. ການກວດສອບຂໍ້ມູນໃບຮັບຮອງລາຍເຊັນເອເລັກໂຕຣນິກ (Certification)....................................... 21

5.7. ຂໍ້ມູນຜູ້ໃຊ້ບໍລິການ (Customer Information) ................................................................ 22

6. ອັບເດດໂປຣແກມ (Update)................................................................................ 22

7. ຂໍ້ມູນກ່ຽວກັບໂປຣແກມ (About) ........................................................................... 23

8. ການເຊັນເອກະສານ ແບບລາຍເຊັນເອເລັກໂຕຣນິກ........................................................... 23

## 1. Token ແມ່ນຫຍັງ?

Token ແມ່ນອຸປະກອນ Digital Certificate ເພື່ອການຢືນຢັນຕົວຕົນດ້ວຍການເຂົ້າລະຫັດລາຍເຊັນ ຫຼື ຊື່ ຂອງບຸກຄົນໃນການເຄື່ອນໄຫວທາງອິນເຕີເນັດອອນລາຍ ເຮັດໃຫ້ສາມາດຮັກສາຄວາມລັບ ແລະ ຄວາມຖືກຕ້ອງຂອງຂໍ້ມູນໄດ້ ໂດຍສ້າງຄວາມເຊື່ອຖືຫລາຍຂຶ້ນດ້ວຍໃບຮັບຮອງລາຍເຊັນເອເລັກໂຕຣນິກ ເຊິ່ງອອກໂດຍອົງກອນກາງທີ່ໜ້າເຊື່ອຖື ທີ່ເອີ້ນວ່າ (CA ຫຼື Certificate Authority) ຄື ຜູ້ໃຫ້ບໍລິການອອກໃບຮັບຮອງລາຍເຊັນເອເລັກໂຕຣນິກ ເປັນທີ່ເຊື່ອຖືໄດ້ ເຊິ່ງຄ້າຍຄືກັບບັດປະຈໍາຕົວທີ່ໃຊ້ໃນການລະບຸຕົວຕົນຂອງບຸກຄົນ.




ຮູບຮ່າງ PKI USB LCA TOKEN

## 2. ການຕິດຕັ້ງ ແລະ ກວດສອບການລົງໂປຣແກມ LCA

ອຸປະກອນ "Plug & Play" ທີ່ສະໜອງຄວາມປອດໄພທີ່ເຂັ້ມແຂງ ແລະ ມີປະສິດທິພາບການໃຊ້ງານ PKI USB LCA Token ມີການເຂົ້າເຖິງ "Plug & Play" ກັບ Middleware Onboard ທີ່ເຂົ້າກັນໄດ້ກັບລະບົບປະຕິບັດການສະເພາະ Windows ແລະ ພອດ USB ທີ່ເຕັມໄປດ້ວຍຄວາມຕ້ອງການບໍ່ມີຮາດແວ ຫຼື ການລົງທຶນຂອງຊອບແວເພີ່ມເຕີມ. ຂະໜາດນ້ອຍກ່ວາມືຂອງທ່ານແລະນໍ້າໜັກໜ້ອຍກ່ວາ, ເຄື່ອງໝາຍ PKI USB LCA Token ແມ່ນການແກ້ໄຂທີ່ປອດໄພທີ່ຈະໃຊ້ຢູ່ທຸກບ່ອນ ແລະ ທຸກສະຖານທີ່ ທີ່ທ່ານຕ້ອງການປ້ອງກັນ.

### 2.1. ການຕິດຕັ້ງ ໂປຣແກມ LCA

- Input LCA token to USB port on your computer .
- Select your Drive “DCriveLCA” and Double click “autorun” for run install middleware .




- ຫຼັງຈາກນັ້ນຈະໄດ້ໜ້າຕ່າງ.



- ກົດຕິດຕັ້ງ (Install).




- ກົດທີ່ OK.




- ກົດຕິດຕັ້ງ (Install).



- ຫຼັງຈາກນັ້ນໃຫ້ກົດທີ່ Finish ເປັນການຕິດຕັ້ງໂປຣແກຣມຮຽບຮ້ອຍ.

## 2.2. ວິທີກວດສອບການລົງໂປຣແກມ LCA




- ຫຼັງຈາກທີ່ຕິດຕັ້ງແລ້ວເຮົາສາມາດກວດສອບວ່າ ໂປຣແກຣມ LCA ເຮົາຕິດຕັ້ງສົມບູນແລ້ວ ຫຼືບໍ່ ໂດຍການເບິ່ງທີ່ມຸມຂວາມືທາງລຸ່ມວ່າມີຮູບ USB LCA Token ຫຼືບໍ່ ເຊິ່ງມັນຈະສະແດງເຖິງວ່າເຮົາໃຊ້ງານຢູ່ ແລ້ວເຂົ້າກວດເບິ່ງໃນCertificates.
- ຖ້າບໍ່ມີຮູບ icon ຂຶ້ນແມ່ນ USB ຍັງບໍ່ທັນເຂົ້າຈະບໍ່ສາມາດໃຊ້ Function ໂປຣແກມໄດ້.



- ຖ້າເປັນ Windows 7 ໃຫ້ກົດປຸ່ມ start ແລ້ວພິມຄໍາວ່າ certmgr.msc



- ຖ້າເປັນ Windows10 ໃຫ້ກົດປຸ່ມ start ແລ້ວພິມຄຳວ່າ cer




- ສຳລັບ Windows 7 ຈະເຫັນວ່າມີ Certmgr ແລະ ສຳລັບ Windows 10 ຈະເຫັນວ່າມີ Mange User certificates ໃຫ້ກົດເຂົ້າໄປເພື່ອກວດສອບເບິ່ງວ່າ ໃນຄອມຂອງທ່ານມີ File ຂອງ NRCA ແລະ LCA ຕາມຮູບລຸ່ມນີ້ແລ້ວຫຼືບໍ່.






- ຖ້າມີ File ຈຳພວກນີ້ຄືບສະແດງວ່າຄອມພິວເຕີຂອງທ່ານພ້ອມແລ້ວທີ່ຈະໃຊ້ງານໂປຣແກມ LCA.

## 3. ຂັ້ນຕອນການນຳໃຊ້ໂປຣແກມ LCA

- ທ່ານສາມາດເປີດໂປຣແກມໄດ້ທີ່ໜ້າ destop ໄດ້ເລີຍ.




- ຫຼັງຈາກທີ່ເຂົ້າມາໃນໂປຣແກມຈະມີໜ້າຕາແບບນີ້.




➢ ໂປແກມ LCA ຈະມີ Function ດັ່ງນີ້ :

1.) Setting ຈະມີ

- Information PKCS
- Change PIN
- Request unlock

2.) Certificate ຈະມີ

- Register Certificate
- Update
- About

### 3.1. ຂໍ້ມູນລາຍລະອຽດຂອງ ຮາດແວ PKI USB LCA TOKEN

**ເຂົ້າໄປ Setting>Information PKCS#11 ທ່ານຈະເຫັນຂໍ້ມູນ PKI USB LCA TOKEN ຂອງທ່ານມີ**

- Token Name ຊື່
- Token Serial ລະຫັດຜະລິດຕະພັນ ຫຼື ລະຫັດ PKI USB LCA TOKEN

- Total Memory ຄວາມຈຳ Token
- Free Memory ຄວາມຈຳທີ່ຍັງເຫຼືອ
- Max PIN Length ລະຫັດຄວາມຍາວສູງສຸດ
- Min PIN Length ລະຫັດຄວາມຍາວຕໍ່າສຸດ
- Hardware Version ເວີຊັນຮາດແວ
- Firmware Version ເວີຊັນເຟີມແວ






## 3.2. ການຈັດການກ່ຽວກັບ ລະຫັດ PIN

**ເຂົ້າໄປທີ່ Setting>Change PIN**

- ແມ່ນການປ່ຽນລະຫັດຜ່ານໃໝ່
- ລະຫັດຜ່ານ PIN default ແມ່ນ (12345678)
- Old PIN ລະຫັດຜ່ານເກົ່າ
- New PIN ລະຫັດຜ່ານໃໝ່
- Confirm New PIN ຢືນຢັນລະຫັດຜ່ານໃໝ່




## 3.3. ການຂໍປົດລ໋ອກ ລະຫັດຜ່ານ PIN

**ກົດໃສ່ Setting>Request Unlock**

ຂໍ້ມູນປະກອບມີ

- Phone number ເບີໂທລະສັບ
- E-mail ອີເມວ



## 4. ຂໍ້ມູນລາຍລະອຽດໃບຮັບຮອງລາຍເຊັນເອເລັກໂຕຣນິກ (Certificates)

ແມ່ນເມນູທີ່ທ່ານໃຊ້ເຂົ້າເບິ່ງລາຍລະອຽດໃບຮັບຮອງລາຍເຊັນເອເລັກໂຕຣນິກ ໃນການເຂົ້າເບິ່ງ ຕ້ອງໄດ້ໃສ່ ລະຫັດຜ່ານ PIN ຂອງ PKI USB LCA TOKEN ທຸກຄັ້ງ ແລ້ວກົດ Login .




- ຫຼັງຈາກທີ່ ກົດ Login ເຂົ້າໄປແລ້ວຈະມີ 1 ເມນູ ຂຶ້ນມາ ຊື່ວ່າ Register Certificate.

### 4.1. ການລົງທະບຽນນຳໃຊ້ ໃບຮັບຮອງລາຍເຊັນເອເລັກໂຕນິກ




- ເມື່ອກົດທີ່ Greate New Request ຈະມີໜ້າຕ່າງ Register Certificate ຂຶ້ນມາເພື່ອ ໃຫ້ທ່ານປ້ອນຂໍ້ມູນລົງທະບຽນ.




- ເມື່ອກົດ Accept ຈະມີຂໍ້ຄວາມຂຶ້ນມາວ່າການຂໍລົງທະບຽນສໍາເລັດແລ້ວລໍຖ້າຜູ້ໃຫ້ບໍລິການອະນຸມັດ.




- ຫຼັງຈາກນັ້ນລໍຖ້າອີເມວຢືນຢັນທີ່ມີ File Certificate ຕິດມາພ້ອມ.




- ພາຍໃນ File Certificate ຈະມີໃບຮັບຮອງລາຍເຊັນເອເລັກໂຕຣນິກ ຖ້າວ່າໃນຄອມເຮົາຍັງບໍ່ມີ File NRCA ແລະ LCA ແມ່ນໃຫ້ໂຫລດເອົາໃນ Email ທີ່ສົ່ງໃຫ້ແລ້ວນຳໄປຕິດຕັ້ງໃສ່ຄອມພິວເຕີ.




## 4.2. ການຕິດຕັ້ງ File Certificate NRCA ແລະ LCA ໃສ່ຄອມພິວເຕີທີ່ຍັງບໍ່ທັນມີ Certificate

- ຂັ້ນຕອນທີ 1: ແມ່ນເຂົ້າໄປທີ່ Control Panel ແລ້ວກົດເລືອກ Internet Options






ຫຼື ເຂົ້າໄປທີ່ IE (Internet Explorer) ກົດທີ່ Tools ແລ້ວເລືອກ Internet Options.







- ຂັ້ນຕອນທີ 2: ໃຫ້ເຂົ້າໄປທີ່ Advanced




ແລ້ວໃຫ້ກົດເອົາເຄື່ອງໝາຍຖືກອອກ ແລ້ວກົດທີ່ OK ຫຼັງຈາກນັ້ນໃຫ້ເປີດ File NRCA ແລະ LCA ຂຶ້ນມາເພື່ອທຳການຕິດຕັ້ງ.

- ຂັ້ນຕອນທີ 3: ເລີ່ມຕົ້ນການຕິດຕັ້ງ File NRCA ແລະ LCA




ກົດເມົ້າຂ້າງຂວາແລ້ວເລືອກທີ່ Install Certificate




ກົດ Next




ກົດເລືອກທີ່ Place all certificates in the following store ແລ້ວກົດ Browse ເລືອກ Trusted Root Certification Authorities ຫຼັງຈາກນັ້ນກົດ OK.




ກົດທີ່ Finish




ກົດທີ່ Yes ເພື່ອຢືນຢັນການນໍາເອົາ Certificates NRCA ແລະ LCA ເຂົ້າມາໃນເຄື່ອງຂອງທ່ານເປັນທີ່ຮຽບຮ້ອຍ.

## 5. ການໃຊ້ງານໂປຣແກຣມ LCA

ຖອດ USB Token ອອກແລ້ວສຽບເຂົ້າໄປໃນຄອມພິວເຕີໃໝ່ເພື່ອໃຫ້ລະບົບໂຫລດເອົາຂໍ້ມູນການລົງທະບຽນນຳໃຊ້ໃບຮັບຮອງລາຍເຊັນເອເລັກໂຕຣນິກ ແລ້ວກົດປຸ່ມດາວໂຫລດ.




ຈະມີຂໍ້ຄວາມຂຶ້ນມາໃຫ້ເຮົາໃສ່ລະຫັດ PIN ເພື່ອຢືນຢັນແລ້ວກົດ Login




ຫຼັງຈາກນັ້ນລໍຖ້າໃຫ້ຂໍ້ຄວາມສະແດງຂຶ້ນມາກໍ່ເປັນອັນສຳເລັດ.




ເຂົ້າໄປທີ່ Certificate ຈະເຫັນວ່າມີ Function ເພີ່ມຂຶ້ນມາໃໝ່.




5.1. ການໃຊ້ງານຫຼັງຈາກ ລົງທະບຽນນຳໃຊ້ສຳເລັດແລ້ວ

ກົດເລືອກທີ່ເມນູ Certificate ແລ້ວໃສ່ລະຫັດ PIN ຫຼັງຈາກນັ້ນກົດ Login.



## 5.2. ວິທີກວດສອບໃບຮັບຮອງລາຍເຊັນເອເລັກໂຕຣນິກ

- ເຂົ້າໄປທີ່ Certificate> ກົດທີ່ Certificate> ແລ້ວກົດເລືອກ View.







ຈະເຫັນຂໍ້ມູນດັ່ງນີ້:

NRCA=Lao National Root Certification Authority

LCA=Lao Certification Authority

ໄດ້ຢັ້ງຢືນໃຫ້ Somchai MOUA ເຊິ່ງແມ່ນ ຜູ້ໃຊ້ບໍລິການ.

### 5.3. ການລົງທະບຽນນຳໃຊ້ ໃບຢັ້ງຢືນລາຍເຊັນເອເລັກໂຕຣນິກ (Register Certificate)

ແມ່ນການລົງທະບຽນນຳໃຊ້ ໃບຢັ້ງຢືນລາຍເຊັນເອເລັກໂຕຣນິກໃໝ່.




### 5.4. ການຕໍ່ອາຍຸໃບຢັ້ງຢືນ ລາຍເຊັນເອເລັກໂຕຣນິກ (Upgrade Certificate)

ແມ່ນການຕໍ່ອາຍຸຂອງໃບຢັ້ງຢືນລາຍເຊັນເອເລັກໂຕຣນິກ ໂດຍການກົດເຂົ້າໄປທີ່ເມນູ Upgrade Certificates ແລ້ວໃສ່ລະຫັດຜ່ານ PIN ຈາກນັ້ນຈະສະແດງໜ້າຕ່າງນີ້ຂຶ້ນມາແລ້ວກໍ່ກຳນົດເວລາທີ່ເຮົາຕ້ອງການວ່າຈະຕໍ່ຈັກເດືອນ ຫຼື ຈັກປີ.




### 5.5. ການປ່ຽນແປງຂໍ້ມູນສ່ວນຕົວ (Change Information)

ແມ່ນການປ່ຽນແປງຂໍ້ມູນສ່ວນຕົວທີ່ເຄີຍ ລົງທະບຽນໃບຢັ້ງຢືນລາຍເຊັນເອເລັກໂຕຣນິກໄວ້ແລ້ວ.




ຫຼັງຈາກທີ່ປ່ຽນແປງຂໍ້ມູນແລ້ວໃຫ້ກົດປຸ່ມ Accept ເພື່ອບັນທຶກຂໍ້ມູນ.

## 5.6. ການກວດສອບຂໍ້ມູນໃບຮັບຮອງລາຍເຊັນເອເລັກໂຕຣນິກ (Certification)

ແມ່ນການກວດສອບຂໍ້ມູນຂອງໃບຮັບຮອງລາຍເຊັນເອເລັກໂຕຣນິກ ແລະ ຍັງສາມາດບັນທຶກເອກະສານໃບຮັບຮອງໄວ້ໄດ້ ດ້ວຍການກົດປຸ່ມ Download.




ຫລັງຈາກນັ້ນລະບົບຈະສະແດງໜ້າ Document ຂຶ້ນມາແລ້ວກົດປຸ່ມ Save ເພື່ອບັນທຶກເອກະສານໃບຮັບຮອງລາຍເຊັນເອເລັກໂຕຣນິກໄວ້ ເອກະສານຈະເປັນໄຟລ PDF.



ຈະໄດ້ເອກະສານເປັນໄຟຣ PDF ແລ້ວນຳໄປເປີດເບິ່ງໄດ້.




## 5.7. ຂໍ້ມູນຜູ້ໃຊ້ບໍລິການ (Customer Information)

ແມ່ນການກວດສອບ ແລະ ສາມາດ Update ຫຼື ປ່ຽນ ເບີໂທ ແລະ ອີເມວໄດ້.




ໂດຍການພິມເບີໂທ ຫຼື ອີເມວໃຫມ່ໃສ່ແລ້ວ ກົດອັບເດດ

## 6. ອັບເດດໂປຣແກມ (Update)

ການອັບເດດໂປຣແກມ ກໍລະນີ ກົດ Update ຈະມີຂໍ້ຄວາມຂຶ້ນວ່າ:

The new version is not available now ແມ່ນໂປຣແກມເປັນ Version ປະຈຸບັນແລ້ວ.




7. ຂໍ້ມູນກ່ຽວກັບໂປຣແກມ (About)

ແມ່ນການເບິ່ງຂໍ້ມູນກ່ຽວກັບໂປຣແກມທີ່ສາມາດເຮັດໄດ້.




8. ການເຊັນເອກະສານ ແບບລາຍເຊັນເອເລັກໂຕຣນິກ

ເລືອກເອກະສານທີ່ຈະເຊັນເປັນໄຟຣ PDF. ຍົກຕົວຢ່າງຕາມຮູບດ້ານລຸ່ມນີ້:






ແບບຟອມລົງທະບຽນຂໍນຳໃຊ້ໃບຢັ້ງຢືນ ລາຍເຊັນເອເລັກໂຕຣນິກ

(Register Electronic Certificate Form)

| ຂໍ້ມູນໃບຢັ້ງຢືນ ລາຍເຊັນເອເລັກໂຕຣນິກ |
|---|
| ☐ ສະໝັກໃໝ່ ☐ ຕໍ່ອາຍຸ ☐ ອື່ນໆ................................................................ |
| ປະເພດໃບຢັ້ງຢືນລາຍເຊັນ ເອເລັກໂຕຣນິກທີ່ຂໍໃຊ້ບໍລິການ |
| ອາຍຸການໃຊ້ງານຂອງ ໃບຢັ້ງຢືນ: ☐ 3 ເດືອນ ☐ 6 ເດືອນ ☐ 12 ເດືອນ ☐ 24 ເດືອນ ☐ 36 ເດືອນ |
| ຂໍ້ມູນຜູ້ຂໍໃຊ້ບໍລິການໃບຢັ້ງຢືນເອເລັກໂຕຣນິກ |
| ☐ ສຳລັບ ບຸກຄົນ (Personal) ☐ ສຳລັບ ບໍລິສັດ ຫຼື ອົງກອນ (Company or Organization)<br>☐ ສຳລັບ ບຸກຄະລາກອນ ຂອງ ບໍລິສັດ ຫຼື ອົງກອນ (Person of company or organization) |
| ຊື່ (ພາສາລາວ) :................................................................<br>ຊື່ (ພາສາອັງກິດ): ☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐☐<br>ໝາຍເຫດ: ໃຫ້ໃສ່ຂໍ້ມູນຕາມທີ່ທ່ານໄດ້ເລືອກໄວ້ຂ້າງເທິງ.<br>ທີ່ຢູ່ (Address): ບ້ານ(Village)..................................ເມືອງ(City) .................................... |

ເພື່ອທີ່ຈະໃຫ້ບຸກຄົນທີ່ທ່ານຕ້ອງການຕິດຕໍ່ຮູ້ຈັກ ແລະ ໝັ້ນໃຈວ່ານີ້ແມ່ນເອກະສານຂອງທ່ານແທ້ທີ່ບໍ່ໄດ້ຖືກບຸກຄົນທີ່ສາມທີ່ບໍ່ຫວັງດີປອມແປງແມ່ນກ່ອນທີ່ຈະສົ່ງເອກະສານເຮົາຕ້ອງທຳການ ລົງລາຍເຊັນເພື່ອລະບຸວ່ານີ້ແມ່ນເອກະສານຂອງເຮົາດ້ວຍການ ເປີດໄຟຣເອກະສານຂຶ້ນມາແລ້ວເຂົ້າໄປທີ່ເມນູ Tools.




ຫຼັງຈາກທີ່ກົດເຂົ້າໄປເຮົາຈະເຫັນເມນູຫຼາຍໆເມນູ



ກົດເລືອກເມນູ Certificates.




ເອກະສານຈະ Add ເມນູໃໝ່ມາໃຫ້ອີກໜຶ່ງເມນູ.




ກົດທີ່ Digitally Sign ແລ້ວ ກົດເມົ້າ ເບື້ອງຊ້າຍລາກໃສ່ບ່ອນທີ່ຕ້ອງການຈະເຊັນ.




ຈະເຫັນວ່າມີ popup ຂື້ນມາວ່ານີ້ແມ່ນໃບຮັບຮອງຂອງທ່ານບໍ່ ຖ້າແມ່ນໃຫ້ກົດຄຳວ່າ continue



ກົດທີ່ປຸ່ມ Sign ເພື່ອເຊັນເອກະສານ.




ໃສ່ຊື່ໄຟຣເອກະສານແລ້ວກົດປຸ່ມ Save.




ຫຼັງຈາກນັ້ນໃຫ້ໃສ່ລະຫັດຜ່ານ PIN PKI USB LCA Token ແລ້ວກົດປຸ່ມ Login.



ເມື່ອໃສ່ລະຫັດຜ່ານແລ້ວ ຈະໄດ້ເອກະສານທີ່ມີການລົງລາຍເຊັນແບບນີ້ຂຶ້ນມາທ່ານສາມາດທຳການສົ່ງໃຫ້ຄົນທີ່ທ່ານຕ້ອງການ  ທີ່ຈະສົ່ງໃຫ້ ຫຼັງຈາກຄົນທີ່ທ່ານໄດ້ສົ່ງເອກະສານໄປໃຫ້ກໍ່ຈະສາມາດເປີດເບິ່ງລາຍເຊັນຂອງທ່ານ ແລະ ສາມາດກວດສອບຂໍ້ມູນການຢັ້ງຢືນຕົວຕົນຂອງທ່ານໄດ້.




ຜູ້ທີ່ໄດ້ຮັບກໍ່ຈະທຳການເປີດລາຍເຊັນເພື່ອເບິ່ງວ່າແມ່ນຂໍ້ມູນຢັ້ງຢືນຕົວຕົນຂອງຜູ້ສົ່ງແທ້ບໍ່ ໂດຍການກົດເຂົ້າໄປໃນເອກະສານແລ້ວກົດເມົ້າສອງບາດໃສ່ລາຍເຊັນ ແລະ ກົດປຸ່ມ Signature Properties ເພື່ອກວດເບິ່ງສະຖານະຂອງການເຊັນ.



ຖ້າມີສະຖານະສີຂຽວສະແດງຂຶ້ນວ່າ Signature is VALID ແມ່ນເອກະສານເຮົາໄດ້ຖືກເຊັນສຳເລັດແລ້ວ.




ກວດເບິ່ງຂໍ້ມູນຂອງ ຜູ້ເຊັນ ໂດຍກົດທີ່ Show Signer's Certificate ເລືອກ Details ແລ້ວ ກົດໃສ່ Subject.







ຫຼັງຈາກທີ່ກົດໃສ່ Subject ແລ້ວ ຜູ້ຮັບເອກະສານ ກໍ່ຈະເຫັນຂໍ້ມູນລາຍລະອຽດຂອງຜູ້ສົ່ງທີ່ໃຊ້ຢັ້ງຢືນຕົວຕົນວ່າ ເປັນຂໍ້ມູນຈິງແທ້ທີ່ເຊື່ອຖືໄດ້.